# ການຊ່ວຍເຫຼືອສຸກເສີນດ້ານອາຫານ

ກໍລະກົດ 2006

ການຊ່ວຍເຫຼືອສຸກເສີນດ້ານອາຫານ (The Emergency Food Assistance Program - TEFAP) ໃຫ້ອາຫານຟຣີແກ່ຄົວເຮືອນທີ່ມີລາຍໄດ້ຕໍ່າ. TEFAP ຂົນສົ່ງອາຫານມາໃຫ້ທະນາຄານອາຫານ ແລະ ໜ່ວຍງານໃຫ້ຄວາມຊ່ວຍເຫຼືອປະມານ 4 ຄັ້ງ ຫຼື ຫຼາຍກວ່າຕໍ່ປີ. ຢາກຮູ້ວ່າທີໃດເມື່ອໃດທີ່ຈະມາເອົາອາຫານ, ບຸກຄົນທີ່ຈະຕິດຕໍ່ໃນທະນາຄານອາຫານໃນທ້ອງຖິ່ນ, ໜ່ວຍງານໃຫ້ຄວາມຊ່ວຍເຫຼືອ ຫຼື ຫ້ອງການ SRS. ເພື່ອໃຫ້ໂຕເອງເໝາະສົມເຂົ້າຮ່ວມໂຄງການ, ບຸກຄົນຕ້ອງເຮັດດັ່ງນີ້:

- ເຊັນໜັງສືທີ່ຢັ້ງຢືນວ່າໂຕເອງເໝາະສົມຮ່ວມໂຄງການ TEFAP. ພວກເຂົາຕ້ອງເຊັນໜັງສືກ່ອນໄປເອົາອາຫານ.
- ແຈ້ງຈຳນວນລາຍໄດ້ ແລະ ຂະໜາດຄົວເຮືອນ.
- ແຈ້ງຫຼັກຖານລາຍໄດ້ ແລະ ຂະໜາດຄອບຄົວ, ຖ້າຖາມ.
- ອາໃສຢູ່ຣັຖຄານຊາສ (Kansas).
- ສະມັກໃນເຂດຂອງໂຕເອງ.
- ຍອມຮັບຕາມເງື່ອນໄຂອື່ນໆຕາມແຕ່ລະທ້ອງຖິ່ນ.

**ມາດຕະຖານລະຮັບປະຈຳເດືອນສູງສຸດ**

| ຂະໜາດ ຄົວເຮືອນ | ລາຍຮັບ ສູງສຸດ | ຂະໜາດ ຄົວເຮືອນ | ລາຍຮັບ ສູງສຸດ |
|---|---|---|---|
| 1 | $1,062 | 5 | $2,535 |
| 2 | $1,430 | 6 | $2,904 |
| 3 | $1,799 | 7 | $3,272 |
| 4 | $2,167 | 8 | $3,640 |

ສະມາຊິກທີ່ເພີ່ມຈາກນີ້ຈະໄດ້ຮັບເພີ່ມ $369 ຕໍ່ຄົນ

ອາຫານທີ່ໃຫ້ອາດແຕກຕ່າງກັນຕາມຕະຫຼາດທາງການກະເສດ. ອາຫານອາດລວມມີ:

| | |
|---|---|
| ຜັກກະປອງ | ຖົ່ວຂຽວ, ສາລີ, ມັນຝຣັ່ງ, ຖົ່ວ, ມັນດ້າງ |

| | |
|---|---|
| ຖົ່ວແຫ້ງ | ຖົ່ວດຳ, ຖົ່ວແດງ |
| ໝາກໄມ້ກະປອງ | ໝາກແພ, ໝາກພິສ, ໝາກພລັມ |
| ນ້ຳໝາກໄມ້ | ນ້ຳໝາກກ້ຽງ, ນ້ຳໝາກໂປມ, ນ້ຳໝາກອະງຸ່ນ |
| ຊີ້ນ/ໂປຣຕີນ | ຊີ້ນງົວ, ຊີ້ນໝູ, ປາ |
| ທັນຍະພືດເຍັນ | ທັນຍາພືດຈາກສາລີ, ທັນຍາພືດຈາກເຂົ້າ, ທັນຍາພືດຈາກເຂົ້າໂອດ |
| ໝາກໄມ້ແຫ້ງ | ໝາກເຊີຣີ, ໝາກອາງູ່ນແຫ້ງ, ໝາກພຣຸນ |
| ອື່ນໆ | ເນີຍຖົ່ວ, ຂະໜົມແຄຣກເກີ, ເຂົ້າ, ນົມແຫ້ງ, ແກງສຳເຣັດຮູບ |

ຂໍ້ມູນກ່ຽວກັບສະຖານທີ່ແຈກຢາຍອາຫານ(.pdf, 91KB)

ຂໍ້ມູນກ່ຽວກັບສະຖານທີ່ຂົນສົ່ງອາຫານລອດໃຫຍ່ (pdf, 703KB)

ເວັບໄຊ ຂອງUSDA ສຳຫຼັບຂໍ້ມູນກ່ຽວກັບໂຄງການແຈກຢາຍອາຫານ ແລະ ຂໍ້ມູນອື່ນໆ

ແຜນທີ່ແຫຼ່ງທືນອາຫານ

ຂໍ້ມູນອື່ນໆກ່ຽວກັບ TEFAP ຫາໄດ້ທີ່ ຄູ່ມືແຈກຢາຍສິນຄ້າແຫ່ງຣັຖ ຄານຊາສ (Kansas Commodity Distribution Manual - KCDM) ຄູ່ມື KCDM ອອນໄລ ຫຼື ທີ່ອົງການທີ່ເຂົ້າຮ່ວມໂຄງການ.

*ອີງຕາມກົດໝາຍກາງ ແລະ ນະໂຍບາຍຂອງກົມກະເສດສະຫະຣັຖ ສະຖາບັນນີ້ຫ້າມການຈຳແນກດ້ານເຊື້ອຊາດ, ສີຜິວ, ປະເທດເກີດ, ເພດ, ອາຍຸ ແລະ ຄວາມພິການ.*

*ເພື່ອລາຍງານການຈຳແນກຂຽນຫາ ອຳນວຍການ USDA, ຫ້ອງການສິດທິພົນລະເມືອ, ຫ້ອງ 326-W, ຫ້ອງການຂາວ, 1400 ຖະໜົນເອກະລາດ. SW, ວໍຊິງຕັນ ດີຊີ (Washington D.C.) 20250-9410, ຫຼື ໂທ (202) 720-5964 (ຝາກຂໍ້ຄວາມ ຫຼື TTD). USDA ແມ່ນອົງການທີ່ໃຫ້ໂອກາດທີ່ສະເໝີພາບທັງຜູ້ໃຫ້ບໍລິການ ແລະ ຜູ້ຈ້າງງານ*

ສຳຫຼັບການບໍລິການອື່ນໆ ຫຼື ຕ້ອງການຫາຫ້ອງການໃຫ້ບໍລິການດ້ານສັງຄົມ ແລະ ການຟື້ນຟູທີ່ໃກ້ບ້ານທ່ານ ໃຫ້ໃຊ້ລິ້ງໃນທ້າຍ ເພຈນີ້.

ປັບປຸງ: ມີຖຸນາ 20, 2006